ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກອງເລຂາຄະນະກຳມະການປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ
ສປປລາວ

# ບົດບັນທຶກກອງປະຊຸມ
# ຄົບຄະນະຄັ້ງທີ 3 - ສົກປີ 2023
# ຂອງຄະນະກຳມະການປະສານງານກອງທຶນໂລກ

ກອງປະຊຸມຄົບຄະນະຂອງຄະນະກຳມະການປະສານງານກອງທຶນໂລກ (CCM) ຄັ້ງນີ້ໄດ້ຈັດຂຶ້ນວັນທີ 28 ກັນຍາ 2023 ເວລາ 08:00 ຫາ 16:30 ທີ່ຫ້ອງປະຊຸມຊັ້ນ 1 ໂຮງແຮມດອນຈັນພາເລດ ໂດຍການເປັນປະທານຂອງ ທ່ານ ສຈ. ດຣ. ພູທອນ ເມືອງປາກ, ປະທານອົງການກາແດງລາວ ພ້ອມທັງເປັນ ປະທານ CCM.

ກອງປະຊຸມຄັ້ງນີ້ໄດ້ປະກອບມີຫຼາຍພາກສ່ວນເຂົ້າຮ່ວມເຊັ່ນ: ສະມາຊິກ ແລະ ຕົວແທນຂອງ CCM ຈຳນວນ 21 ທ່ານ (ມີສິດອອກສຽງໄດ້ 17 ທ່ານ) ແລະ ພາກສ່ວນອື່ນໆຈຳນວນ 29 ທ່ານ ເຊິ່ງຕາງໜ້າຈາກທີມງານກອງທຶນໂລກ, ຄະນະກຳມະການກວດກາຂອງ CCM, ຄະນະກຳມະການຂົນຂວາຍແຫຼ່ງທຶນຂອງ CCM, ກົມແຜນການ ແລະ ການເງິນ (DPF) ກະຊວງສາທາລະນະສຸກ, ຕາງໜ້າຈາກໂຄງການ 3 ພະຍາດ, PR ກະຊວງສາທາລະນະສຸກ, PR-UNOPS, ທີມງານໂຄງການ HANSA, ບັນດາຄູ່ຮ່ວມງານ ແລະ ກອງເລຂາ CCM ລວມທັງຜູ້ເຂົ້າຮ່ວມຜ່ານທາງອອນລາຍ ລວມທັງໝົດ 50 ທ່ານ.

## ວາລະກອງປະຊຸມ:

1. ລາຍງານຜົນການລົງຕິດຕາມກວດກາຢູ່ແຂວງວຽງຈັນໃນລະຫວ່າງວັນທີ 01-05 ສິງຫາ 2023
2. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກ ສຳລັບໂຄງການ RAI3E, RAI4E ແລະ Matching Fund;
3. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກສຳລັບວຽກງານໂຄງການ HIV/AIDS, TB ແລະ C19RM;
4. ສະເໜີການມີສ່ວນຮ່ວມຂອງໄວໜຸ່ມໃນ GF ແລະ CCM-CSO, KPs, PLWDs ແລະ ແຜນການເລືອກຕັ້ງສະເພາະສະມາຊິກ CCM ໃໝ່ທີ່ມາຈາກ CSO ປີ 2024;
5. ລາຍງານຜົນການວິເຄາະຂໍ້ມູນຈາກກິດຈະກຳຕິດຕາມດ້ວຍຊຸມຊົນສຳລັບ MSM, TG ແລະ PLHIV.

## ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:

ປະທານ CCM ໄດ້ຕ້ອນຮັບຢ່າງອົບອຸ່ນ ແລະ ສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ເຂົ້າຮ່ວມໃນຫ້ອງປະຊຸມ ແລະ ເຂົ້າຮ່ວມທາງອອນລາຍ.
ປະທານ CCM ໄດ້ນຳສະເໜີວາລະກອງປະຊຸມເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ມີຄຳເຫັນ ແລະ ຮັບຮອງເອົາ. ກອງເລຂາ CCM ໄດ້ຢືນຢັນວ່າ ອົງປະກອບຄະນະປະຊຸມແມ່ນພຽງພໍ. ກອງປະຊຸມຄັ້ງນີ້ບໍ່ໄດ້ມີການລົງຄະແນນສຽງ ແລະ ສະມາຊິກ CCM ກໍ່ບໍ່ໄດ້ມີຂໍ້ຂັດແຍ້ງທາງດ້ານຜົນປະໂຫຍດ.

ພ້ອມດຽວກັນນີ້, ກອງເລຂາ CCM ກໍ່ໄດ້ລາຍງານຄວາມຄືບໜ້າໃນການປະຕິບັດຜົນຂອງກອງປະຊຸມ CCM ຄັ້ງທີ 2 ວັນທີ 17 ພຶດສະພາ 2023 ທີ່ຜ່ານມາ ເຊິ່ງກອງປະຊຸມໄດ້ຕົກລົງ ແລະ ຮັບຮອງເອົາດັ່ງລຸ່ມນີ້:

1. ຮັບຮອງເອົາຮ່າງເອກະສານຂອງໂຄງການ HANSA 2 -PAD ແລະ ບົດສະເໜີຂໍທຶນຊ່ວຍເຫຼືອຈາກກອງທຶນໂລກຮອບໃໝ່ສົກປີ 2024-2026 ຂອງໂຄງການວັນນະໂລກ/ເອສໄອວີ ແບບຄົບຊຸດ ໂດຍສຽງສ່ວນຫຼາຍ. ກອງປະຊຸມໄດ້ມອບໃຫ້ບັນດາສູນທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມງານສືບຕໍ່ເຮັດວຽກເພື່ອໃຫ້ສຳເລັດ ແລະ ສົ່ງໃຫ້ກອງທຶນໂລກທັນເວລາຕາມທີ່ໄດ້ກຳນົດໄວ້ວັນທີ 30 ພຶດສະພາ 2023 (ສຳລັບສະບັບທຳອິດ). ຫຼັງຈາກນັ້ນ, ກໍ່ໄດ້ຮັບຄຳແນະນຳຈາກກອງທຶນໂລກໃຫ້ຍື່ນບົດສະເໜີຂໍທຶນສະບັບທຳທີ່ສອງວັນທີ 15 ກັນຍາ 2023.
2. ກອງເລຂາ CCM ໄດ້ເຜີຍເອກະສານແບບຄົບຊຸດຂອງໂຄງການ RAI4E ຜ່ານທາງອີເມລ ໃຫ້ຄະນະກຳມະການ CCM ເພື່ອທົບທວນ ແລະ ພິຈາລະນາຮັບຮອງເອົາ ແຜນການຈັດສັນງົບປະມານຂອງ RAI4E, ທຶນ PAAR ແລະ ໂຄງຮ່າງການຈັດຕັ້ງພະນັກງານໂຄງການປະຈຳຢູ່ CMPE. ຫຼັງຈາກນັ້ນ, ກອງເລຂາ CCM ກໍ່ໄດ້ກະກຽມແບບຟອມການເຊັນຮັບຮອງ (CCM Members Endorsement of Budget Allocation, PAAR and RAI4E Structure) ເພື່ອໃຫ້ຄະນະກຳມະການ CCM ທັງໝົດເຊັນຮັບຮອງແລ້ວ ແລະ ໄດ້ສົ່ງໃຫ້ PR UNOPS ປະຈຳ ສປປ ລາວ ສຳເລັດແລ້ວ.

## ວາລະທີ 1: ລາຍງານຜົນການລົງຕິດຕາມກວດກາຢູ່ແຂວງວຽງຈັນໃນ ວັນທີ 01-05 ສິງຫາ 2023

ບົດລາຍງານຜົນການໄປຕິດຕາມກວດກາວຽກງານຢູ່ແຂວງວຽງຈັນ ໃນລະຫວ່າງວັນທີ 01-05 ສິງຫາ 2023, ໄດ້ຜ່ານການລາຍງານຕໍ່ກອງປະຊຸມຮ່ວມລະຫວ່າງຄະນະກຳມະການບໍລິຫານງານກອງທຶນໂລກ (ExCom) ແລະ ຄະນະກຳມະການຕິດຕາມກວດກາ (OC) ໄດ້ຈັດຂຶ້ນວັນພຸດ, ທີ 30 ສິງຫາ 2023 ທີ່ຜ່ານມາ ແລະ ໄດ້ຮັບການປັບປຸງບົດລາຍງານດັ່ງກ່າວຕາມຄຳເຫັນຂອງຜູ້ເຂົ້າຮ່ວມ ແລະ ຈຶ່ງໄດ້ນຳມາລາຍງານຕໍ່ກອງປະຊຸມ CCM ໃນຄັ້ງນີ້. ພາຍຫຼັງທີ່ໄດ້ຮັບຟັງການລາຍງານດັ່ງກ່າວ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນຄືກັນກັບໃນກອງປະຊຸມວັນທີ 30 ສິງຫາ 2023 ແລະ ເຫັນດີເປັນສ່ວນໃຫຍ່, ແຕ່ກໍ່ຍັງໄດ້ມີຄຳເຫັນເພີ່ມເຕີມດັ່ງລຸ່ມນີ້:

- ຕາງໜ້າຈາກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ໄດ້ແຈ້ງໃຫ້ຊາບວ່າ: ສຳລັບຊື່ ໂຮງໝໍນ້ອຍ ແມ່ນຈະໄດ້ປ່ຽນມາເປັນສຸກສາລາ ແລະ ໂຮງໝໍຊຸມຊົນ ແມ່ນຈະໄດ້ປ່ຽນມາເປັນ ໂຮງໝໍເມືອງ;
- ສຳລັບຂອດການປະສານງານການສົ່ງຕໍ່ຄົນເຈັບ, ແມ່ນສະເໜີໃຫ້ຕັ້ງກຸ່ມ WhatsApp ຂອງພະນັກງານສຸກສາລາ, ໂຮງໝໍເມືອງ ແລະ ໂຮງໝໍແຂວງ ເພື່ອອຳນວຍຄວາມສະດວກໃຫ້ຄົນເຈັບໄດ້ຮັບການກວດກ່ອນໂດຍບໍ່ໄດ້ລໍຖ້າ;
- ສຳລັບວຽກງານ HIV/AIDS ໃນໂຄງການ HANSA2 ແມ່ນໄດ້ປັບປຸງຂອດການປະສານງານແລ້ວ ໄດ້ການສ້າງກຸ່ມການປະສານງານຜ່ານທາງອອນລາຍສຳລັບພະນັກງານຂອງສູນ ARV ແລະ POC ແລະ ໄດ້ຈັດການຝຶກອົບຮົມ Training Community Practice Online 2 ຄັ້ງແລ້ວ;
- ສິ່ງທ້າທາຍສຳລັບວຽກງານ TB ໃນໂຄງການ HANSA2 ແມ່ນການກວດກັ່ນຕອງຄອບຄົວຄົນເຈັບ TB ບໍ່ໄດ້ໃຫ້ຄວາມຮ່ວມມືເທົ່າທີ່ຄວນ ແລະ ຄົນເຈັບດື້ຕໍ່ຢາ TB ປະຕິເສດການປິ່ນປົວ;
- ກອງປະຊຸມໄດ້ຕົກລົງເຫັນດີໃຫ້ກອງເລຂາ CCM ຈັດຕັ້ງປະຕິບັດແຜນການໄປຕິດຕາມກວດກາວຽກງານຄັ້ງຕໍ່ໄປຢູ່ແຂວງບໍລິຄຳໄຊ ໃນຕົ້ນເດືອນພະຈິກ 2023.

## ວາລະທີ 2: ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກ ສຳລັບໂຄງການ RAI3E, RAI4E ແລະ Matching Fund

### ສຳລັບໂຄງການ RAI3E ແລະ RAI4E

ພາຍຫຼັງທີ່ໄດ້ຮັບຟັງການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກ ສຳລັບໂຄງການ RAI3E ແລະ RAI4E, ຜູ້ເຂົ້າຮ່ວມກອງປະຊຸມໄດ້ເຫັນດີເປັນສ່ວນໃຫຍ່ ແລະ ໄດ້ມີຄຳເຫັນເພີ່ມເຕີມດັ່ງລຸ່ມນີ້:

- ຕາງໜ້າຈາກ DPF ໄດ້ແຈ້ງຕໍ່ CMPE ວ່າ: ລະບົບຕ້ອງອັບເດດໃຫ້ມັນດີຂຶ້ນກ່ວາເກົ່າ ແລະ ຖ້າພົບບັນຫາໃດ ກໍ່ໃຫ້ແຈ້ງຕໍ່ DPF ດ່ວນ ເພື່ອຈະໄດ້ຈັດສົ່ງວິຊາການໄປແກ້ໄຂໃຫ້ທັນເວລາ;

- ຕໍ່ກັບຜູ້ຕາງໜ້າວຽກງານໄຂ້ຍຸງ ໄດ້ສະເໜີຂໍອາສາສະໝັກຕື່ມນັ້ນ ທາງ CMPE ແມ່ນຈະຈັດສັນອາສາສະໝັກເພີ່ມຕື່ມໄປຕາມສະຖານທີ່ເຮັດວຽກທີ່ເຫັນວ່າມີຄວາມຈຳເປັນເທົ່ານັ້ນ;

**Matching Fund**

- ຖ້າ NCLE ແລະ NTC ນຳໃຊ້ຫ້ອງວິເຄາະຮ່ວມກັນ ອາດຈະພົບຄວາມຫຍຸ້ງຍາກໃນການເຮັດວຽກ ແລະ ການບູລະນະຮັກສາອຸປະກອນຕ່າງໆ;
- ພາຍໃນອາທິດໜ້າ CHAS ຈະລວມລວມບັນດາເອກະສານໃຫ້ຄົບຖ້ວນ ແລະ ຍື່ນໃຫ້ທັນເວລາຕາມທີ່ກຳນົດໄວ້ ແລະ ຍັງຈະໄດ້ປັບ TOR ຄືນໃໝ່;
- ກອງປະຊຸມໄດ້ແນະນຳໃຫ້ DPF ເປັນຜູ້ຊີ້ນຳໆພາ CHAS, NTC, NCLE ແລະ ພາກສ່ວນທີ່ກ່ຽວຂ້ອງປະສານສົມທົບກັນເພື່ອຈັດປະຊຸມປຶກສາຫາລືກັນໃໝ່ ເພື່ອປັບປຸງບົດສະເໜີຂໍທຶນຄືນໃໝ່.

## ວາລະທີ 3: ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກສຳລັບວຽກງານໂຄງການ HIV/AIDS, TB ແລະ C19RM

ພາຍຫຼັງທີ່ໄດ້ຮັບຟັງການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ເຫັນດີເປັນສ່ວນໃຫຍ່ ແລະ ໄດ້ມີຄຳເຫັນເພີ່ມເຕີມດັ່ງລຸ່ມນີ້:

- ຕາງຫນ້າຈາກສະມາຄົມຜູ້ຕິດຊື້ HIV (APL+) ໄດ້ມີຄຳເຫັນດັ່ງນີ້:
  - ການເຂົ້າເຖິງການປິ່ນປົວຂອງເດັກນ້ອຍເກີດໃຫມ່ຍັງບໍ່ໄດ້ຮັບຢາຍອດຢ່າງທົ່ວເຖິງ ຍ້ອນຂາດນ້ຳຢາ ແລະ ຮອດເວລາກຳນົດກວດຄືນກໍຍັງບໍ່ທັນທົ່ວເຖິງ;
  - ໄດ້ແລກປ່ຽນບົດຮຽນຈາກໂຄງການ C19RM ທີ່ລົງໄປຕິດຕາມຊຸມຊົນຮ່ວມກັນລະຫວ່າງແພດຫມໍ ແລະ ອສບ, ແລະ ໄດ້ເຈາະເລືອດໃຫ້ຄົນທີ່ບໍ່ມີເງື່ອນໄຂ ແລະ ເດັກນ້ອຍ ແມ່ນໄດ້ຮັບຜົນດີ. ຖ້າຫາກ ອສມ ຫລື ຕົວແທນໄດ້ຮັບການຝຶກອົບຮົມການເຈາະເລືອດ ແລ້ວສົ່ງຜົນກວດມາໃຫ້ທ່ານຫມໍກໍ່ຍິ່ງຈະເປັນການດີທີ່ເຮັດໃຫ້ການເຂົ້າເຖິງViral load;
  - ໄດ້ມີການຊ່ອງແສງຈາກຜູ້ກິນຢາ Prep ສ່ວນໃຫຍ່ໄດ້ມີຄຳຖາມວ່າ ເປັນຫຍັງກິນຢາ Prep ແລ້ວຍັງຕ້ອງໄດ້ໃສ່ຖົງຢາງອະນາໄມຢູ່;
- Co-chair ໄດ້ເນັ້ນຍໍ້າກ່ຽວກັບປະເດັນຕໍ່ກັບຄຳຖາມຂອງ PR ທີ່ໄດ້ສະເຫນີວ່າ ຖ້າຫາກ PR ໄດ້ປິດໂຄງການ C19RM ພາຍໃນເດືອນ 3 ປີ 2024 ແລະ Audit ໃນເດືອນທັດໄປ ແມ່ນໃຜຈະເປັນຄົນກະກຽມເອກະສານ;
- ຕໍ່ກັບປະເດັນດັ່ງກ່າວ: GF CT representative ໄດ້ລາຍງານວ່າ:
  - ຄືດັ່ງທີ່ GF ໄດ້ກ່າວໃນການເດີນທາງຢ້ຽມຢາມ ນະຄອນຫຼວງວຽງຈັນ ສປປ ລາວ ທີ່ຜ່ານມາ, ການຕົກລົງກັນໃນການປິດໂຄງການ C19RM ໄດ້ໄປທົ່ວຫຼາຍປະເທດໃນອົງການຈັດຕັ້ງ ແລະ ຈະມີແນວທາງສະເພາະໃນການຕິດຕາມການປິດໂຄງການດັ່ງກ່າວ.
  - ໃນປັດຈຸບັນ, ຄືດັ່ງທີ່ໄດ້ນຳສະເຫນີມານັ້ນ, GF ຈະມີຄວາມພະຍາຍາມປະຕິບັດຕາມໄລຍະເວລາທີ່ກຳນົດໄວ້. ໃນແງ່ຂອງພະນັກງານບຸກຄະລາກອນ (HR), GF ບໍ່ມີບັນຫາສະເພາະກ່ຽວກັບ HR ແຕ່ສິ່ງທີ່ GF ຕ້ອງການຢາກຮູ້ແມ່ນຈຳນວນພະນັກງານທີ່ຍັງເຮັດວຽກຢູ່ຈັກຄົນ ແລະ ອອກໄປແລ້ວຈັກຄົນ. GF ຍັງຄົງສະຫນອງທຶນໃຫ້ຜ່ານ HANSA2 ພາຍໃຕ້ PRs ແລະ SRs ທີ່ອັນດຽວກັນ ແລະ ຄາດວ່າຈະຈັດສັນ HR ພາຍໃຕ້ທຶນຊ່ວຍເຫຼືອ HANSA2 ຈະປະຕິບັດການປິດກິດຈະກຳ C19RM. ທິດທາງໃນການປິດນັ້ນ ຈະມີຂຶ້ນໃນກາງເດືອນຕຸລາ ແລະ ຈະປະກາດໃຫ້ທົ່ວອົງການຈັດຕັ້ງ.
- ຕາງໜ້າຈາກ CHAS ໄດ້ມີຄຳເຫັນກ່ຽວກັບ closing C19RM ແມ່ນອີງຕາມຕາລາງໄລຍະເວລາຂອງກອງທຶນໂລກຄືເກົ່າ. closing activities ວັນທີ 25 ເດືອນ 12 2023, ບັນຊີສະຫລຸບຄ່າໃຊ້ຈ່າຍ ວັນທີ 31 ທັນວາ 2023. ຫລັງຈາກນັ້ນກໍຈະມີການສົ່ງ PUDR ພາຍໃນ 1 ເດືອນ ແລະ Audit ຕາມມາ. ທີ່ຜ່ານມາກໍ່ໄດ້ຈ້າງພະນັກງານບັນຊີໃຫ້ຢູ່ຕໍ່ຈົນສຳເລັດ Audit ເພື່ອຮັບປະກັນການລາຍງານທີ່ມີລາຍລະອຽດຄົບຖ້ວນສົມບູນ. ພ້ອມ

ດຽວກັນນີ້ ສະເໜີໃຫ້ກອງທຶນໂລກປະຕິບັດຕາມການລາຍງານການເງິນທີ່ຜ່ານມາໄດ້ບໍ່ ແລະ ຈະລໍຖ້າຄຳແນະນຳພາຍໃນກາງເດືອນຕຸລານີ້ກ່ອນ, ແຕ່ຖ້າບໍ່ໄດ້ກໍ່ຂໍໃຫ້ PR ຮັບຜິດຊອບຊ່ວຍ SRs.

## ວາລະທີ 4: ສະເໜີການມີສ່ວນຮ່ວມຂອງໄວໜຸ່ມໃນ GF ແລະ CCM-CSO, KPs, PLWDs ແລະ ແຜນການເລືອກຕັ້ງສະເພາະສະມາຊິກ CCM ໃໝ່ທີ່ມາຈາກ CSO ປີ 2024

ພາຍຫຼັງທີ່ໄດ້ຮັບຟັງການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ເຫັນດີເປັນສ່ວນໃຫຍ່ ແລະ ໄດ້ມີຄຳເຫັນເພີ່ມເຕີມດັ່ງລຸ່ມນີ້:

- ຜູ້ຕາງໜ້າຈາກ CSO ມີຄຳເຫັນຕໍ່ກັບ CSO-KP-PLWDs reform:
  - ສະເໜີຢາກໃຫ້ CSO-KP-PLWDs reform ໂດຍການເປີດກ້ວາງຂຶ້ນ ເພື່ອຮັບປະກັນໃຫ້ມີການມີສ່ວນຮ່ວມຢ່າງຫ້າວຫັນ ແລະ ມີຄວາມໝາຍຂອງ CSO-KP-PLWDs, ຫລືຕົວແທນ ທີ່ເຮັດວຽກຕິດພັນກັບ 3 ພະຍາດ. ກຸ່ມຄົນດັ່ງກ່າວເຂົ້າໃຈເປົ້າໝາຍຂອງວຽກງານ ແລະ ດຶງເອົາເນື້ອໃນຈິດໃຈຂອງຊຸມຊົນ, ຜູ້ທີ່ໄດ້ຮັບຜົນກະທົບຈາກ 3 ພະຍາດມາປຶກສາຫາລືກັນ, ວາງແຜນ, ກຳນົດທິດທາງຍຸດທະສາດຮ່ວມກັນ ແລະ ນຳສະເໜີ;
  - ການລົງທຶນໃສ່ກຸ່ມສ່ຽງຕ້ອງມີຄວາມດຸ່ນດ່ຽງກັນ ເພາະທຸກກຸ່ມຄົນແມ່ນມີຄວາມສ່ຽງໝົດ ແຕ່ລະດັບຄວາມສ່ຽງແຕກຕ່າງກັນ ເຊັ່ນ: ກຸ່ມ FSW, MSM ແລະ TG.
- ຕາງໜ້າຈາກ Faith Based Organization ສະເໜີຢາກໃຫ້ອອກນິຕິກຳເກນອາຍຸລະຫວ່າງໄວໜຸ່ມ ແລະ ຊາວໜຸ່ມ ເພື່ອບໍ່ໃຫ້ມີຄວາມສັບສົນ ແລະ ຄວາມແຕກຕ່າງລະຫວ່າງໄວໜຸ່ມ ແລະ ຊາວໜຸ່ມ. ແນວທາງການຄັດເລືອກກຸ່ມຄົນດັ່ງກ່າວມາເປັນສະມາຊິກ CCM ໃນເຂດເລືອກຕັ້ງຂອງ CSO-KP-PLWDs ມີຄືແນວໃດ? ຕາງໜ້າຈາກ CHIAs ໄດ້ກ່າວວ່າ: ພາຍຫລັງມີການຮັບຮອງເອົາໄວໜຸ່ມທີ່ຈະມາເປັນສະມາຊິກ CCM ໃນເຂດເລືອກຕັ້ງຂອງ CSO-KP-PLWDs ແລ້ວ ຈະມີການຂໍຄຳເຫັນ ແລະ ປຶກສາຫາລືກັນຮ່ວມກັບຄະນະກຳມະການ CCM ອີກຕື່ມ.
- ປະທານ OC ໄດ້ໃຫ້ຄວາມກະຈ່າງແຈ້ງເພີ່ມເຕີມກ່ຽວກັບເກນອາຍຸຂອງຊາວໜຸ່ມ ແລະ ໄວໜຸ່ມ ທີ່ໃຊ້ໃນບົດຄົ້ນຄວ້າວິໄຈກ່ຽວກັບໄວໜຸ່ມ ດັ່ງລຸ່ມນີ້:
  - ເກນອາຍຸຂອງຊາວໜຸ່ມເລີ່ມຈາກ 15 ຫາ 35 ປີ
  - ເກນອາຍຸຂອງໄວໜຸ່ມແມ່ນເລີ່ມຈາກອາຍຸ 10 ຫາ 24 ປີ. ໄວໜຸ່ມຂັ້ນທຳອິດແມ່ນ 10 ຫາ 13 ປີ, ຂັ້ນທີ່ 2 ແມ່ນ 14 ຫາ 17 ປີ ແລະ ຂັ້ນສຸດທ້າຍ 18 ຫາ 24 ປີ;
- ທ່ານປະທານCCM ກໍໄດ້ເນັ້ນຍໍ້າວ່າຕໍ່ກັບຄວາມແຕກຕ່າງລະຫວ່າງໄວໜຸ່ມ ແລະ ຊາວໜຸ່ມ:
  - ພາຍຫລັງຜູ້ເຂົ້າຮ່ວມຈຳນວນ 9 ທ່ານ ຍົກມືຂຶ້ນ ທີ່ມີອາຍຸລຸ່ມ 35ປີ, ໝາຍຄວາມວ່າໄວໜຸ່ມກໍໄດ້ເຂົ້າມີສ່ວນຮ່ວມແລ້ວ;
  - ເນັ້ນໃຫ້ປັບປຸງຄະນະຊາວໜຸ່ມໃຫ້ເປັນຊາວໜຸ່ມຕາມເກນອາຍຸແທ້;
  - ເຫັນດີໃຫ້ໄວໜຸ່ມ ແລະ ຊາວໜຸ່ມປະກອບສ່ວນເຂົ້າໃນອົງປະກອບຂອງ CCM ແຕ່ຕ້ອງມີລັກສະນະການຈັດຕັ້ງ ແລະ ສະເໜີໃຫ້ສູນກາງຊາວໜຸ່ມເຂົ້າຢູ່ໃນ CCM ອີກຕື່ມ. ໄວໜຸ່ມກໍ່ເປັນອົງປະກອບໜຶ່ງທີ່ເຮັດວຽກຢູ່ໃນ CSO ກໍ່ໄດ້ເຂົ້າຮ່ວມກອງປະຊຸມຢູ່ Bangkok ເຊິ່ງມີຕົວແທນໄວໜຸ່ມຈາກ CCM ທີ່ມາຈາກ CSO ແລ້ວ ແລະ ບໍ່ໄດ້ຜ່ານການຄັດເລືອກ, ເຊິ່ງຈະເຮັດໃຫ້ພົບບັນຫາເວລາໄປຊີ້ແຈງຢູ່ກອງປະຊຸມວ່າບໍ່ໄດ້ມີໄວໜຸ່ມເຂົ້າຮ່ວມ. ທຸກວຽກງານທົ່ວໂລກ ແມ່ນສະໜັບສະໜູນໃຫ້ໄວໜຸ່ມມີສ່ວນຮ່ວມ ເຊິ່ງເປັນນະໂຍບາຍອັນໜຶ່ງທີ່ສຳຄັນໃນການສ້າງອາສາສະໝັກຕັ້ງແຕ່ອາຍຸໄວໜຸ່ມ ເຊັ່ນ: ອົງການກາແດງ;
  - ຕ້ອງແຍກໃຫ້ອອກລະຫວ່າງຊາວໜຸ່ມທີ່ເປັນການຈັດຕັ້ງຢ່າງເປັນທາງການ ແລະ ໄວໜຸ່ມທີ່ກະສຽນເຂົ້າມາເຮັດວຽກໃໝ່.

## ວາລະທີ 5: ລາຍງານຜົນການວິເຄາະຂໍ້ມູນຈາກກິດຈະກຳຕິດຕາມດ້ວຍຊຸມຊົນສຳລັບ MSM, TG ແລະ PLWDs

- ຜູ້ຕາງຫນ້າຈາກ APL+ ໄດ້ມີຄຳເຫັນເພີ່ມເຕີມກ່ຽວກັບບົບນຳສະເຫນີ
  - ສະເຫນີໃນຮອບວຽນນີ້ຈະເປັນຄຳສະເຫນີທີ່ຈະເອົາໄປເປັນແວນແຍ່ງ ແຕ່ບໍ່ສາມາດເປັນຕົວແທນໃຫ້ແກ່ 3 ກຸ່ມນີ້ໄດ້. ໃນຮອບວຽນຕໍ່ໄປຈະມີ Link survey ຈະເຮັດໃຫ້ຜູ້ທີ່ໃຊ້ບໍລິການ (ຜູ້ຕິດເຊື້ອ, ຜູ້ທີ່ມາຮັບຢາ Prep) ລວມທັງໂຮງຫມໍ ແລະ CBS ໄດ້ເຂົ້າຮ່ວມຫລາຍຂຶ້ນ;
  - ຍັງມີຂໍ້ຈຳກັດກ່ຽວກັບການກຳນົດກຸ່ມເປົ້າຫມາຍ ແລະ ສະຖານທີ່ບໍລິການ;
  - ຕົວຊີ້ວັດທີ່ອອກມານັ້ນບໍ່ສາມາດວັດແທກສິ່ງທີ່ບໍລິການນັ້ນວ່າດີຫລືບໍ່ດີ ແຕ່ມັນເປັນພຽງຄວາມຮູ້ສຶກຂອງກຸ່ມຄົນສ່ວນຫນຶ່ງທີ່ບອກວ່າຍັງມີສິ່ງເຫລົ່ານີ້ຢູ່.
- CCM Chair ໄດ້ເນັ້ນວ່າ ຖ້າແມ່ນໂຮງຫມໍໃດ, ຕ້ອງໄດ້ຕຳນິໃຫ້ໂຮງໂຫມໍນັ້ນປັບປັງແກ້ໄຂປັງປຸງແກ້ໄຂ ແລະ ໃຫ້ຜູ້ຕາງຫນ້າເຂົ້າໃຈກ່ຽວກັບສະພາບແວດລ້ອມເປັນຫຍັງຈຶ່ງເຮັດໃຫ້ສະພາບເປັນຄືແນວນີ້. ຄວາມຢາກເຮັດແນວນີ້ແຕ່ຄວາມພ້ອມ, ສະພາບ, ເງື່ອນໄຂ. ຜູ້ຕາງຫນ້າໄດ້ເຂົ້າຮ່ວມຮັບຟັງແລ້ວບໍ່ກ່ຽວກັບຂໍ້ສະເຫນີ, ສິ່ງທ້າທາຍ, ຢູ່ທາງແຂວງວຽງຈັນ ເຊັ່ນ: ວັດຖຸອຸປະກອນ (ເຄື່ອງອຳນວຍຄວາມສະດວກ), ບຸກຄະລາກອນ (ຄວາມຮູ້ຄວາມສາມາດ), ຄົນເຈັບບໍ່ໃຫ້ການຮ່ວມມື. ຜູ້ສະຫນອງບໍລິການມີຄວາມພ້ອມຊ່ຳໃດ. ກະຊວງສາທາລະນະສຸກມີຄຳຂວັນແລ້ວ 5 ດີ 1 ພໍໃຈ ແລະ ພະຍາຍາມບຸກບືນຢ່າງສຸດຂີດ. ຢາກໃຫ້ສ້າງຄວາມເຂົ້າໃຈກ່ຽວກັບຂໍ້ມູນວ່າຈະມີການປັບປຸງປ່ຽນແປງຄືແນວໃດ.
- CCM Chair ໄດ້ສັງລວມເນື້ອໃນກອງປະຊຸມດັ່ງນີ້:
  - ຕໍ່ກັບຂໍ້ສະເຫນີ ການມີສ່ວນຮ່ວມຂອງໄວຫນຸ່ມໃນເຂດເລືອກຕັ້ງ CSO-KP-PLWDs ແລະ ການຕິດຕາມໂດຍຊຸມຊົນ ແມ່ນ ຖືກທິດທາງຂອງພັກ ແລະ ລັດຖະບານວາງອອກແລ້ວ ໃນການຫັນເປັນຫນຸ່ມ, ເຊິ່ງຈະຕ້ອງໃຊ້ເວລາໃຫ້ໄວຫນຸ່ມມີຄວາມຮູ້ຄວາມສາມາດພຽບພ້ອມແລ້ວ ຈຶ່ງຈະມອບວຽກອັນສຳຄັນນີ້ໃຫ້. ຕອນນີ້ໄວຫນຸ່ມຍັງເຮັດບໍ່ທັນໄດ້ ແລະ ຜູ້ຕາງຫນ້າກໍ່ຍັງຊີ້ນຳຢູ່ ເຊິ່ງປະກອບດ້ວຍ CSO ມີ 5 ພາກສ່ວນແຕ່ກໍຍັງເຮັດວຽກຂອງໄວຫນຸ່ມມາສັງລວມ ແລະ ນຳສະເຫນີຂອງໄວຫນຸ່ມຕໍ່ທີ່ປະຊຸມ. ລັດຖະບານຈຶ່ງກຳນົດເກນອາຍຸ ເຊັ່ນ: ໄວຫນຸ່ມ, ຊາວຫນຸ່ມ, ໄວກາງ, ອາຍຸເກີນຊ່ຳໃດ ແລ້ວກໍ່ບໍ່ໃຫ້ຢູ່ໃນວຽກງານນີ້. ວຽກງານ 3 ສ້າງ: ສ້າງແຂວງເປັນຫົວຫນ່ວຍຍຸດທະສາດ, ສ້າງເມືອງເປັນຫົວຫນ່ວຍເຂັ້ມແຂງ, ຮອບດ້ານ, ບ້ານເປັນຫົວຫນ່ວຍຈັດຕັ້ງປະຕິບັດ ແລະ ສ້າງຊຸມຊົນໃຫ້ເຂັ້ມແຂງ. ດັ່ງທີ່ອົງການຈັດຕັ້ງທາງສັງຄົມກຳລັງດຳເນີນຢູ່ ວ່າຊຸມຊົນມີຄວາມພ້ອມ ແລະ ມີຄວາມຮູ້ຄວາມສາມາດຊ່ຳໃດ (ອ.ສ.ມ ຊາວຫນຸ່ມ ບາງທ່ານກຶກຫນັງສື). ຂໍຊົມເຊີຍຕໍ່ສາກົນທີ່ໃຫ້ການສະຫນັບສະຫນູນທິດທາງຂອງລັດຖະບານ, ແຕ່ຈະເຮັດແນວໃດ, ເຮັດວິທີໃດ.
  - ໃຫ້CSO 5 ພາກສ່ວນໄດ້ມີການຄັດເລືອກກັນເອງ ແຕ່ຕ້ອງຂຶ້ນຢູ່ກັບ CCM ເຊິ່ງຢູ່ພາຍໃຕ້ການຊີ້ນຳພາຂອງກະຊວງສາທາລະນະສຸກ ແລະ ກອງທຶນໂລກ ເພາະ CCM ມີຄະນະດຽວຢູ່ໃນ ສປປ ລາວ;
  - ສືບຕໍ່ເກັບກໍຂໍ້ມູນໂດຍຊຸມຊຸມເພື່ອເປັນການສົ່ງຂ່າວໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໄດ້ນຳໄປປັບປຸງແກ້ໄຂ.

ກ່ອນຈະປິດກອງປະຊຸມ ທ່ານປະທານກອງປະຊຸມ ໄດ້ສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນ ມາຍັງຜູ້ເຂົ້າຮ່ວມທັງໝົດໃນຫ້ອງປະຊຸມ ແລະ ທັງອອນລາຍ. ກອງປະຊຸມຄັ້ງນີ້ໄດ້ສຳເລັດ ແລະ ປິດລົງໃນເວລາ 16:30.

ນະຄອນຫຼວງວຽງຈັນ, ວັນທີ 12 ຕຸລາ 2023

| **ປະທານກອງປະຊຸມ** | **ຜູ້ສັງລວມເນື້ອໃນກອງປະຊຸມ** |
|---|---|
| ທ່ານ ສຈ. ດຣ. ພູທອນ ເມືອງປາກ<br>ປະທານ ອົງການກາແດງລາວ,<br>ປະທານ CCM | ທ່ານ ບຸດສາລີ ລັດຕະນະ<br>ຜູ້ປະສານງານ ແລະ ການເງິນ<br>ກອງເລຂາ CCM |